ສຳນັກງານ ຄຄຊ
ຮັບ ເລກທີ 1269
ວັນທີ 15 NOV 2017
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ ເລກທີ 11 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 13 ພະຈິກ 2017

# ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ ຕຸລາ ປີ 2017 ແລະ ທິດທາງແຜນການໃນຕໍ່ໜ້າ

## ພາກທີ I
## ຕີລາຄາສະພາບການເຄື່ອນໄຫວວຽກງານທີ່ພົ້ນເດັ່ນຂອງທະນາຄານໃນໄລຍະຜ່ານມາ

### I. ວຽກງານການເມືອງ-ແນວຄິດ

ໃນໜຶ່ງເດືອນຜ່ານມາ, ສະພາບການເມືອງແນວຄິດຂອງສະມາຊິກພັກ-ພະນັກງານພາຍໃນຂະແໜງທະນາຄານ ມີຄວາມສະຫງົບປົກກະຕິ, ມີຄວາມອຸ່ນອ່ຽນທຸ່ນທ່ຽງ, ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ-ລະບຽບວິໄນ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກ ແລະ ເອົາໃຈໃສ່ໃນການປະຕິບັດໜ້າທີ່ການເມືອງຂອງຕົນໄດ້ເປັນຢ່າງດີ ຊຶ່ງສາມາດສະຫຼຸບຕີລາຄາສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ ປະຈຳເດືອນ ຕຸລາ 2017 ແລະ ທິດທາງແຜນການໃນເດືອນ ພະຈິກ 2017 ດັ່ງລາຍລະອຽດລຸ່ມນີ້:

### II. ສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ.

- ໄດ້ເຂົ້າຮ່ວມກອງປະຊຸມຕ່າງໆ: ຄະນະນຳ ທຫລ ໄດ້ເດີນທາງໄປເຂົ້າຮ່ວມກອງປະຊຸມປະຈຳປີຂອງກອງທຶນການເງິນສາກົນ ແລະ ກຸ່ມທະນາຄານໂລກ ທີ່ປະເທດ ສ. ອາເມລິກາ; ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII ເພື່ອຜ່ານແຜນເງິນຕາ ແລະ ທິດທາງແຜນການ ປະຈຳປີ 2018; ກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນ ຕຸລາ 2017; ກອງປະຊຸມກ່ຽວກັບຜົນການກວດສອບຂອງອົງການກວດສອບລັດຖະບານ;ກອງປະຊຸມພົບປະພ້ອມຮັບຟັງການໂອ້ລົມຂອງ ທ່ານ ນາຍົກລັດຖະມົນຕີ ແລະ ພິທີມອບລາງວັນທຸລະກິດສຳລັບວິສາຫະກິດຂະໜາດນ້ອຍ ແລະ ກາງ ດີເດັ່ນປະຈຳປີ 2017; ກອງປະຊຸມຮ່ວມກັບຄະນະປະຈຳສະພາແຫ່ງຊາດ ເພື່ອຜ່ານຮ່າງກົດໝາຍວ່າດ້ວຍລະບົບການຊຳລະ; ກອງປະຊຸມກ່ຽວກັບການປະຕິບັດໂຄງການສົ່ງເສີມການຜະລິດເປັນສິນຄ້າ ແລະ ຄ້ຳປະກັນສະບຽງອາຫານ;
- ສຳເລັດການຈັດກອງປະຊຸມຕ່າງໆ: ກອງປະຊຸມຂອງຄະນະສະເພາະກິດ ເພື່ອແກ້ໄຂບັນຫາບໍລິສັດພີເອັສ ສົ່ງເສີມກະສິກຳ ແລະ ອຸດສາຫະກຳຄົບວົງຈອນ ຂາອອກ-ຂາເຂົ້າ; ກອງປະຊຸມຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ກອງປະຊຸມເຜີຍແຜ່ວຽກງານການຈັດຕັ້ງປະຕິບັດປະເມີນຄວາມສ່ຽງລະດັບຊາດກ່ຽວກັບການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນຂະແໜງການທະນາຄານ; ກອງປະຊຸມຄະນະກຳມະການລະດັບສູງວຽກງານການເຊື່ອມໂຍງຂະແໜງການເງິນອາຊຽນ (SLC) ຄັ້ງທີ 14 ແລະ ກອງປະຊຸມຄະນະກຳມະການວຽກງານເສີມສ້າງຄວາມສາມາດ (SCCB) ຄັ້ງທີ 13 ຢູ່ແຂວງຫຼວງພະບາງ; ກອງປະຊຸມຄະນະຄົ້ນຄວ້ານະໂຍບາຍອັດຕາແລກປ່ຽນ ແລະ ຄຸ້ມຄອງເງິນຕາຕ່າງປະເທດ; ກອງປະຊຸມການໃຫ້ສິນເຊື່ອແກ່ຜູ້ປະກອບການຄັງສິນຄ້າ ແລະ ການຄຸ້ມຄອງຫຼັກຊັບຄ້ຳປະກັນຄັ້ງທີ 05; ກອງປະຊຸມປຶກສາຫາລືການຊຸກຍູ້ສົ່ງເສີມການຜະລິດກາເຟເປັນສິນຄ້າ; ກອງປະຊຸມສະພາບໍລິຫານ ສະຖາບັນການທະນາຄານ ສະໄໝສາມັນ ຄັ້ງທີ I ປະຈຳປີ 2017;

- ສຳເລັດການຈັດຝຶກອົບຮົມ ແລະ ສຳມະນາໃນຫົວຂໍ້ຕ່າງໆ: “ຄວາມຮູ້ກ່ຽວກັບການນຳໃຊ້ລະບົບຊຳລະທາງອີເລັກໂທຣນິກ ແລະ ແນະນຳການນຳໃຊ້ລະບົບບັດທະນາຄານຮ່ວມກັນຂອງ ທຫລ”; “ການຄິດໄລ່ອັດຕາດອກເບ້ຍປະກັນທີ່ເປັນທຳຂອງລະບົບປະກັນໄພເງິນຝາກ”;

- ສຳເລັດການຈັດຕັ້ງພິທີແລະ ເຂົ້າຮ່ວມພິທີຕ່າງໆ: ຈັດຕັ້ງເຜີຍແຜ່ບົດແນະນຳການຈັດຕັ້ງປະຕິບັດດຳລັດວ່າດ້ວຍການແຈ້ງຊັບສິນ (ສະບັບປັບປຸງ) ໃຫ້ພະນັກງານທົ່ວຂະແໜງການທະນາຄານທີ່ຢູ່ສູນກາງ ແລະ ທ້ອງຖິ່ນ; ຈັດຕັ້ງພິທີມອບ-ຮັບເອກະສານແຈ້ງຊັບສິນ ແລະ ລາຍຮັບພະນັກງານທະນາຄານຂັ້ນສູນກາງຄຸ້ມຄອງ; ຈັດພິທີເປີດສົກຮຽນ 2016-2017 ແລະ ສະເຫຼີມສະຫຼອງວັນຄູແຫ່ງຊາດ ວັນທີ 07 ຕຸລາ 2017 ຂອງສະຖາບັນການທະນາຄານ;

- ສຳເລັດການຕ້ອນຮັບແຂກສາກົນເຂົ້າພົບປະຄະນະນຳ ທຫລ ມີ ທ່ານ ເອກອັກຄະລັດຖະທູດ ມາເລເຊຍ ປະຈຳລາວ ແລະ ຄະນະຜູ້ແທນຈາກກະຊວງການເງິນ ຂອງ ສ.ອາເມລິກາ.

## III. <u>ສະພາບພົ້ນເດັ່ນການເຄື່ອນໄຫວວຽກງານວິຊາສະເພາະ</u>

ໃນ 1 ເດືອນຜ່ານມາ, ທະນາຄານແຫ່ງ ສປປ ລາວ ໄດ້ເອົາໃຈໃສ່ຕິດຕາມສະພາບເສດຖະກິດສາກົນ; ຕະຫຼາດເງິນຕາພາຍໃນ; ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ; ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ; ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບຢ່າງເປັນປົກກະຕິ ໂດຍມີສະພາບຄ່ອງດີ ເຊິ່ງສະແດງອອກຄື:

### 1. <u>ສະພາບເສດຖະກິດເງິນຕາສາກົນ.</u>

- ໃນເດືອນ 10/2017, ສະພາບເສດຖະກິດໂລກສືບຕໍ່ຂະຫຍາຍຕົວ ແລະ ມີການຟື້ນຕົວທີ່ແຕກຕ່າງກັນໃນແຕ່ລະຂົງເຂດ ເປັນຕົ້ນ: ກຸ່ມປະເທດເສດຖະກິດທີ່ພັດທະນາແລ້ວ ຄາດວ່າຈະຂະຫຍາຍຕົວໃນລະດັບ 2,1% ໃນປີ 2017 ແລະ ກຸ່ມປະເທດເສດຖະກິດເກີດໃໝ່ ແລະ ກຳລັງພັດທະນາ ຈະຂະຫຍາຍຕົວ 4,6%. ໃນນັ້ນ, ປະເທດຍີ່ປຸ່ນ ຈະຂະຫຍາຍຕົວຢູ່ໃນລະດັບ 1,5% ໃນປີ 2017 ແລະ 0,7% ໃນປີ 2018. ສຳລັບຂົງເຂດອາຊີ ປະກອບມີ: ສປ. ຈີນ ແລະ ອິນເດຍ ຈະຂະຫຍາຍຕົວ 6,8% ແລະ 6,7% ຕາມລຳດັບ ເນື່ອງຈາກໄດ້ຮັບແຮງຊຸກຍູ້ຈາກອຸປະສົງພາຍໃນປະເທດ ແລະ ຕະຫຼາດແຮງງານທີ່ຟື້ນຕົວດີຂຶ້ນຢ່າງຕໍ່ເນື່ອງ. ເຖິງຢ່າງໃດກໍ່ຕາມ, ອັດຕາເງິນເຟີ້ໃນກຸ່ມປະເທດທີ່ພັດທະນາແລ້ວ ສືບຕໍ່ຢູ່ໃນລະດັບຕ່ຳກວ່າ 2% ແລະ ຈະມີທ່າອ່ຽງເພີ່ມຂຶ້ນໃນປີ 2018;

- ສຳລັບອັດຕາແລກປ່ຽນ: ເງິນໂດລາແຂງຄ່າ 0,13% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງ ສ.ອາເມລິກາ ອອກມາດີ ເປັນຕົ້ນ: ຕົວເລກຍອດການສັ່ງຊື້ສິ້ນຄ້າທີ່ມີຄວາມທົນທານ ເພີ່ມຂຶ້ນ 1,70% ຂອງເດືອນ 08/2017 ຈາກຫຼຸດລົງ 6,80% ໃນເດືອນຜ່ານມາ; ພ້ອມກັນນັ້ນ, ຕົວເລກດັດຊະນີພາກອຸດສາຫະກຳໂຮງງານ ເພີ່ມຂຶ້ນເປັນ 60,8 ຈຸດ ຂອງເດືອນ 09/2017 ຈາກ 58,8 ຈຸດ ໃນເດືອນຜ່ານມາ ແລະ ຕົວເລກການສັ່ງຊື້ສິນຄ້າຂອງໂຮງງານ ເພີ່ມຂຶ້ນ 1,20% ຂອງເດືອນ 08/2017 ຈາກ ຫຼຸດລົງ 3,30% ໃນເດືອນຜ່ານມາ. ໃນຂະນະທີ່, ຈຳນວນປະຊາຊົນທີ່ຂໍສະຫວັດດີການຕໍ່ເນື່ອງ ຫຼຸດລົງເປັນ 1,89 ລ້ານຄົນ ໃນອາທິດທີ 30/09/2017 ຈາກ 1,92 ລ້ານຄົນໃນອາທິດຜ່ານມາ;

- ສ່ວນລາຄານ້ຳມັນ ເພີ່ມຂຶ້ນ 5,46% ຈາກ 48,64 ໂດລາ/ບາເຣວ ມາເປັນ 51,30 ໂດລາ/ບາເຣວ ພາຍຫຼັງຄັງສຳຮອງນ້ຳມັນດິບ ຂອງ ສ.ອາເມລິກາ ຫຼຸດລົງ 1,85 ລ້ານບາເຣວ ຂອງອາທິດທີ 22/09/2017 ພ້ອມກັນນັ້ນ, ປະເທດຊາອຸດິອາຣະເບຍ ຈະຫຼຸດປະລິມານການສົ່ງອອກນ້ຳມັນດິບ 0,56ລ້ານບາເຣວ/ວັນ ໃນເດືອນພະຈິກ ປີ 2017 ຊຶ່ງສອດຄ່ອງກັບຂໍ້ຕົກລົງຂອງກຸ່ມໂອເປັກໃນການປັບຫຼຸດກຳລັງການຜະລິດລົງ 1,80 ລ້ານບາເຣວ/ວັນ ໄປຈົນຮອດເດືອນມີນາ ປີ 2018. ໃນດ້ານລາຄາຄຳ ຫຼຸດລົງ 0,85% ຈາກ 1.305,06 ໂດລາ/ອອນ ມາເປັນ 1.294,03 ໂດລາ/ອອນ ເນື່ອງຈາກກອງທຶນ SPDR ເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳເພື່ອເກງກຳໄລ, ເຮັດໃຫ້ປະລິມານຄຳທີ່ກອງທຶນ SPDR ຖືຄອງຫຼຸດລົງ 13,59 ໂຕນ ເປັນ 851,06 ໂຕນ ໃນວັນທີ 05/10/2017 ຈາກ 864,65 ໂຕນໃນວັນທີ 29/09/2017.

### 2. <u>ສະພາບເງິນຕາພາຍໃນ</u>.

– ອັດຕາເງິນເຟີ້ປະຈຳເດືອນ 10/2017 (ຕົວເລກຄາດຄະເນ) ຢູ່ໃນລະດັບ 0,61% ເພີ່ມຂຶ້ນຈາກ 0,32% ໃນເດືອນ 09/2017;

– ຖານເງິນຕາປະຈຳເດືອນ 10/2017 ຫຼຸດລົງ 133,11 ຕື້ກີບ ຫຼື 0,35% ທຽບໃສ່ເດືອນ 09/2017, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 17,55%. ປະລິມານເງິນ M2 ຫຼຸດລົງ 544,60 ຕື້ກີບ ຫຼື 0,71% ທຽບໃສ່ເດືອນ 09/2017 ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8.309,16 ຕື້ກີບ ຫຼື 12,32%;

– ອັດຕາແລກປ່ຽນທີ່ວລະບົບໃນເດືອນ 10/2017 ທຽບເດືອນ 9/2017 ເໜັງຕີງໃນຂອບທີ່ກຳນົດໄວ້ ເຫັນໄດ້ຈາກເງິນກີບອ່ອນຄ່າ 0,20% ທຽບເງິນໂດລາ ແລະ ອ່ອນຄ່າ 0,24% ທຽບເງິນບາດ. ຖ້າສົມທຽບໃສ່ທ້າຍປີຜ່ານມາ ເຫັນວ່າເງິນກີບອ່ອນຄ່າ 0,35% ທຽບກັບເງິນໂດລາ ແລະ ອ່ອນຄ່າ 7,30% ທຽບເງິນບາດ;

– ມູນຄ່າການຊື້-ຂາຍເງິນຕາຕ່າງປະເທດປະຈຳເດືອນ 10/2017 (12/09-12/10/2017) ເຫັນວ່າມູນຄ່າການຊື້-ຂາຍເງິນຕາຕ່າງປະເທດ ຫຼຸດລົງ 39,08% ຖ້າທຽບໃສ່ເດືອນ 09/2017. ທທກ ຂາຍເງິນຕາຕ່າງປະເທດ ສຸດທິ 40,62 ລ້ານໂດລາສະຫະລັດທຽບເທົ່າ (ໃນນັ້ນ, ຂາຍເງິນບາດສຸດທິ 1.071,49 ລ້ານບາດ ຫຼື 32,18 ລ້ານໂດລາສະຫະລັດທຽບເທົ່າ ພ້ອມທັງຂາຍເງິນໂດລາສຸດທິ 8,44 ລ້ານໂດລາສະຫະລັດ). ໃນນັ້ນ ທຫລ ໄດ້ດຸນດ່ຽງຂາຍເງິນຕາຕ່າງປະເທດໃຫ້ ທທກ ສຸດທິ 59,78 ລ້ານໂດລາສະຫະລັດທຽບເທົ່າ (ໃນນັ້ນ, ຂາຍເງິນໂດລາສຸດທິ 48,25 ລ້ານໂດລາສະຫະລັດ ແລະ ຂາຍເງິນບາດສຸດທິ 387,70 ລ້ານບາດ ຫຼື 11,52 ລ້ານໂດລາສະຫະລັດທຽບເທົ່າ). ປະລິມານການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນ ຈຳນວນ 27,23 ລ້ານໂດລາສະຫະລັດທຽບເທົ່າ (ໃນນີ້ປະລິມານຊື້-ຂາຍເງິນໂດລາສະຫະລັດ 17,80 ລ້ານໂດລາສະຫະລັດ ແລະ ເງິນບາດ 314,19 ລ້ານບາດ ຫຼື 9,44 ລ້ານໂດລາສະຫະລັດ);

– ດຸນການຊຳລະກັບຕ່າງປະເທດປະຈຳເດືອນ 10/2017 (12/09-11/10/2017) ໄດ້ມີກະແສເງິນໄຫຼອອກຜ່ານລະບົບທະນາຄານສຸດທິ 111,59 ລ້ານໂດລາສະຫະລັດ. ໃນນັ້ນ, ກະແສເງິນໄຫຼອອກ ຈຳນວນ 656,62 ລ້ານໂດລາສະຫະລັດ ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່ານຳເຂົ້າສິນຄ້າຂອງວິສາຫະກິດ ຈຳນວນ 342,34 ລ້ານໂດລາສະຫະລັດ ແລະ ຊຳລະຄ່າບໍລິການ ຈຳນວນ 101,17 ລ້ານໂດລາສະຫະລັດ, ສ່ວນກະແສເງິນໄຫຼເຂົ້າ ຈຳນວນ 545,03 ລ້ານໂດລາສະຫະລັດ ຊຶ່ງສ່ວນໃຫຍ່ແມ່ນຮັບຈາກການລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 139,95 ລ້ານໂດລາສະຫະລັດ ແລະ ຮັບເງິນຈາກການສົ່ງອອກສິນຄ້າ ຈຳນວນ 133,46 ລ້ານໂດລາສະຫະລັດ.

### 3. <u>ການລະດົມເງິນຝາກ ແລະ ການປ່ອຍສິນເຊື່ອ</u>

– ການລະດົມເງິນຝາກຂອງທະນາຄານທຸລະກິດ: ຮອດວັນທີ 12/10/2017 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 65.959,92 ຕື້ກີບ ເມື່ອທຽບໃສ່ເດືອນຜ່ານມາ ຫຼຸດລົງ 0,71%. ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 12,59%. ເງິນຝາກເປັນເງິນກີບ ຫຼຸດລົງ 0,85% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 47,28% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດ ຫຼຸດລົງ 0,60% ຊຶ່ງກວມເອົາ 52,82% ຂອງເງິນຝາກທັງໝົດ;

– ການປ່ອຍສິນເຊື່ອຂອງທະນາຄານທຸລະກິດ: ຮອດວັນທີ 12/10/2017 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 65.195,47 ຕື້ກີບ ເພີ່ມຂຶ້ນ 0,92% ເມື່ອທຽບໃສ່ເດືອນຜ່ານມາ. ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 12,59%. ສິນເຊື່ອເປັນເງິນກີບ ກວມເອົາ 50,06% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາຕ່າງປະເທດ ກວມເອົາ 49,94% ຂອງສິນເຊື່ອທັງໝົດ;

– ທະນາຄານນະໂຍບາຍ ປ່ອຍສິນເຊື່ອທັງໝົດ 26,78 ຕື້ກີບ ທຽບໃສ່ເດືອນຜ່ານມາ ຫຼຸດລົງ 70%, ເກັບຕົ້ນທຶນໄດ້ 25,13 ຕື້ກີບ ທຽບໃສ່ເດືອນຜ່ານມາ ຫຼຸດລົງ 11% (ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ). ຍອດສິນເຊື່ອຮອດທ້າຍເດືອນ 10/2017 ມີຈຳນວນ 3.169,13 ຕື້ກີບ ເທົ່າກັບ 95,21% ຂອງແຜນການ (3.328,31 ຕື້ກີບ). ໃນນີ້ສິນເຊື່ອຢູ່ເມືອງເປົ້າໝາຍ 2.108,72 ຕື້ກີບ, ຈຸດສຸມລັດຖະບານ-ທ້ອງຖິ່ນ 297,82 ຕື້ກີບ, ບ້ານເຮັດທົດລອງ 3 ສ້າງ 331,26 ຕື້ກີບ ແລະ ໂຄງການຜະລິດເປັນສິນຄ້າ 431,33 ຕື້ກີບ.

## 4. ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ

### 4.1. ການເຄື່ອນໄຫວຊຳລະສະສາງ

ການຊຳລະສະສາງດ້ວຍແຊັກຜ່ານສູນຊຳລະສະສາງໃນເດືອນນີ້ ມີຈຳນວນ 3.402 ສະບັບ ຫຼຸດລົງ 1,28% ເປັນເງິນຈຳນວນ 1.532,64 ຕື້ກີບ ຫຼຸດລົງ 6,79% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີຈຳນວນ 138 ຄັ້ງ ຫຼຸດລົງ 25% ເມື່ອທຽບໃສ່ເດືອນຜ່ານມາ ມີມູນຄ່າການໂອນ 638,71 ຕື້ກີບ ຫຼຸດລົງ 21,70% ເມື່ອທຽບໃສ່ເດືອນຜ່ານມາ; ສຳລັບການໂອນເງິນຜ່ານລະບົບຊຳລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 25/09-24/10/2017 ມີຈຳນວນ 14.403 ຄັ້ງ ລາຍລະອຽດມີດັ່ງນີ້:

- ສະກຸນເງິນກີບ: ມີການເຄື່ອນໄຫວ ຈຳນວນ 14.145 ຄັ້ງ ມີມູນຄ່າການໂອນ 3.345,25 ຕື້ກີບ ຫຼຸດລົງ 18,41% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 3.981 ຄັ້ງ. ໃນນັ້ນ ມີ 42 ພາກສ່ວນທີ່ເຮັດທຸລະກຳ (ທະນາຄານທຸລະກິດ 38 ແຫ່ງ, ຕະຫຼາດຫຼັກຊັບ, LAPS, BCONEX ແລະ ກະຊວງການເງິນ);
- ກະຊວງການເງິນ: ມີການເຄື່ອນໄຫວ ຈຳນວນ 258 ຄັ້ງ ມີມູນຄ່າການໂອນ 302,40 ຕື້ກີບ ຫຼຸດລົງ 44,80%.

### 4.2 ການຊື້-ຂາຍພັນທະບັດ

- ໃນເດືອນ 10/2017 ພັນທະບັດກະຊວງການເງິນບ້ວງລະດົມທຶນ ຜ່ານ ທຫລ (ບ້ວງ ທຫລ ບໍ່ຄ້ຳປະກັນ) ມີການຈຳໜ່າຍ 28 ຕື້ກີບ ຊຶ່ງປະກອບດ້ວຍ: ທະນາຄານຮ່ວມທຸລະກິດລາວ-ຫວຽດ 20 ຕື້ກີບ, ກອງທຶນປົກປ້ອງຜູ້ຝາກເງິນ 3 ຕື້ກີບ ແລະ ທະນາຄານພົງສະຫວັນ 5 ຕື້ກີບ ແລະ ໄດ້ໄຖ່ຖອນພັນທະບັດຄືນ ຈຳນວນ 53 ຕື້ກີບ ພ້ອມດຽວກັນນັ້ນ, ກໍ່ໄດ້ໄຖ່ຖອນພັນທະບັດຄືນໃຫ້ທະນາຄານຮ່ວມທຸລະກິດລາວ-ຫວຽດ 20 ຕື້ກີບ, ທະນາຄານກຸງເທບປາກເຊ 10 ຕື້ກີບ, ທະນາຄານພົງສະຫວັນ 3 ຕື້ກີບ ແລະ ທະນາຄານລາວ-ຝຣັ່ງ 20 ຕື້ກີບ
- ພັນທະບັດຂອງກະຊວງການເງິນ ມີຍອດເຫຼືອທັງໝົດ 3 ບ້ວງ ມູນຄ່າ 5.766 ຕື້ກີບ ແລະ 65 ລ້ານໂດລາສະຫະລັດ (ບ້ວງລະດົມທຶນ ທຫກ ໂດຍກົງ 154 ຕື້ກີບ ແລະ 65 ລ້ານໂດລາສາຫະລັດ, ພັນທະບັດບ້ວງລ້າງໜີ້ 2.678 ຕື້ກີບ, ບ້ວງລະດົມທຶນຈາກ ທຫກ ປະມູນຜ່ານ ທຫລ 2.934 ຕື້ກີບ);
- ສຳລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 10/2017 ບໍ່ມີການຈຳໜ່າຍພັນທະບັດ ທຫລ, ປັດຈຸບັນຍັງມີຍອດເຫຼືອພັນທະບັດບໍ່ທັນໄຖ່ຖອນ ທັງໝົດ 404 ລ້ານໂດລາສະຫະລັດ. ພ້ອມນີ້, ທຫລ ໄດ້ຈ່າຍດອກເບ້ຍພັນທະບັດໃຫ້ທະນາຄານແຫ່ງຊາດຈີນ ແລະ ທະນາຄານ ICBC ຈຳນວນ 1.740.362 ລ້ານໂດລາ.

## 5. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

- ດັດຊະນີຕະຫຼາດຫຼັກຊັບລາວໃນເດືອນນີ້ປິດຢູ່ທີ່ 1.023,93 ຈຸດ ຫຼຸດລົງ 0,46% ເມື່ອທຽບໃສ່ເດືອນຜ່ານມາ ແລະ ເພີ່ມຂຶ້ນ 0,92% ເມື່ອທຽບໃສ່ດັດຊະນີ ທ້າຍປີຜ່ານມາ, ຕະຫຼອດເດືອນມີປະລິມານຊື້-ຂາຍຮຸ້ນທັງໝົດ 762.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,97 ຕື້ກີບ ຫຼຸດລົງ 75,44% ທຽບໃສ່ເດືອນຜ່ານມາ, ໂດຍເປັນຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 51,44% ຂອງມູນຄ່າການຊື້-ຂາຍທັງໝົດ;
- ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.353 ກີບ/ຮຸ້ນ ເພີ່ມຂຶ້ນ 105 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 177.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 951,72 ລ້ານກວ່າກີບ ຫຼຸດລົງ 70,50% ເມື່ອທຽບໃສ່ເດືອນຜ່ານມາ, ໂດຍເປັນຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 33,78% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ;
- ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.152 ກີບ/ຮຸ້ນ ເພີ່ມຂຶ້ນ 84 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 320.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,65 ຕື້ກວ່າກີບ ເພີ່ມຂຶ້ນ 14,00% ເມື່ອທຽບໃສ່ເດືອນຜ່ານມາ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 41,47% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ;
- ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 7.400 ກີບ/ຮຸ້ນ ເພີ່ມຂຶ້ນ 2 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 3.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 24,42 ລ້ານກວ່າ

ກີບ ຫຼຸດລົງ 99,67% ເມື່ອທຽບໃສ່ເດືອນຜ່ານມາ ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນພາຍໃນປະເທດ ກວມເອົາ 0,04% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ;

- ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 1.916 ກີບ/ຮຸ້ນ ຫຼຸດລົງ 8 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 4.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 8,43 ລ້ານກີບ ຫຼຸດລົງ 10,56% ທຽບໃສ່ເດືອນຜ່ານມາ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 51,63% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ;

- ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 2.950 ກີບ/ຮຸ້ນ ຫຼຸດລົງ 18 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 885.000 ກີບ ຫຼຸດລົງ 86,45% ທຽບໃສ່ເດືອນຜ່ານມາ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນພາຍໃນປະເທດສະເລ່ຍ ກວມເອົາ 100% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN ທັງໝົດ;

- ຮຸ້ນຂອງບໍລິສັດ ພູສີກໍ່ສ້າງ ມະຫາຊົນ (PCD) ຊຶ່ງເລີ່ມມີການຊື້-ຂາຍທຳອິດໃນວັນທີ 10 ຕຸລາ 2017 ມີລາຄາຊື້-ຂາຍສະເລ່ຍ 1.320 ກີບ/ຮຸ້ນ, ມີປະລິມານຊື້-ຂາຍທັງໝົດ 255.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 337,43 ລ້ານກີບ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນພາຍໃນປະເທດສະເລ່ຍ ກວມເອົາ 12,71% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PCD ທັງໝົດ.

6. ວຽກງານອື່ນໆ

– ໄດ້ອະນຸຍາດໃຫ້ທະນາຄານທຸລະກິດ ນຳເງິນເຂົ້າ ສປປ ລາວ ຈຳນວນ 114,56 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 70% ທຽບໃສ່ເດືອນຜ່ານມາ. ໃນນີ້ມີເງິນໂດລາສະຫະລັດ ຈຳນວນ 93,7 ລ້ານໂດລາສະຫະລັດ ກວມເອົາ 82% ຂອງເງິນທັງໝົດ, ເງິນບາດ 657 ລ້ານບາດ. ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 211,34 ລ້ານໂດລາສະຫະລັດທຽບເທົ່າ ຫຼຸດລົງ 67% ທຽບໃສ່ເດືອນຜ່ານມາ. ໃນນີ້ມີເງິນໂດລາສະຫະລັດ ຈຳນວນ 163,34 ລ້ານໂດລາສະຫະລັດ ກວມເອົາ 77% ຂອງເງິນທັງໝົດ, ເງິນບາດ 1,49 ຕື້ບາດ, 22.235 ເອີໂຣ, 8.090 ຝຣັ່ງສະວິດ, 2.630 ປອນສະເຕີລິງ, 14,49 ລ້ານເຢັນ, 2.405 ໂດລາແຄນນາດາ, 62.215 ໂດລາອົດສະຕາລີ, 200 ຢວນ, 1.000 ກຣອນແດນມາກ ແລະ 35 ລ້ານດົງ;

– ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ: ສຳເລັດການອອກໃບອະນຸຍາດສ້າງຕັ້ງໜ່ວຍບໍລິການສະບັບປ່ຽນແທນ ໃຫ້ທະນາຄານນະໂຍບາຍ ແລະ ອອກໃບອະນຸຍາດສ້າງຕັ້ງສະບັບປ່ຽນແທນໃຫ້ແກ່ທະນາຄານການຄ້າຕ່າງປະເທດລາວມະຫາຊົນ; ສຳເລັດການລົງກວດກາທະນາຄານໄຊງ່ອນ-ຮ່າໂນ້ຍ ລາວ ຈຳກັດ ແລະ ທະນາຄານລາວຈີນ ຈຳກັດ ປະຈຳປີ 2016 ຫາ ໄຕມາດ 2/2017; ສຳເລັດພິທີມອບ-ຮັບໃບອະນຸຍາດດຳເນີນທຸລະກິດຊົ່ວຄາວຂອງ ສກຈບ ສົມຫວັງທັນໃຈ;

– ສຳເລັດບົດລາຍງານຕ່າງໆຄື: ບົດຄົ້ນຄວ້າຜົນກະທົບການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຕໍ່າກັບລະດັບການນຳໃຊ້ເງິນຕາຫຼາຍສະກຸນຢູ່ ສປປ ລາວ; ບົດປະເມີນນະໂຍບາຍການຄຸ້ມຄອງອັດຕາດອກເບ້ຍຂອງ ທຫລ ປະຈຳປີ 2016 ແລະ ແຜນການຄຸ້ມຄອງ ສຳລັບປີ 2017;

– ສຳເລັດການສ້າງດຳລັດວ່າດ້ວຍການປົກປ້ອງເງິນຝາກ ຊຶ່ງໄດ້ຮັບການເຊັນຮັບຮອງຈາກ ທ່ານ ນາຍົກລັດຖະມົນຕີ ແລະ ກະຊວງຍຸຕິທຳນິຕິກໍາຫມາຍເຫດ ເພື່ອປະກາດໃຊ້ຢ່າງເປັນທາງການ;

– ໄດ້ຮັບທະນະບັດປອມ ປະເພດໃບ 50.000 ກີບ ຈຳນວນ 01 ໃບ ຈາກສະຖາບັນການທະນາຄານ;

– ໄດ້ຮັບສຳນວນທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ (STR) ຈາກທະນາຄານທຸລະກິດຈຳນວນ 09 ສະບັບ ເຊິ່ງຮອດປະຈຸບັນ STR ລວມທັງໝົດມີ 649 ສະບັບ.

## ພາກທີ II

## ວຽກງານຈຸດສຸມໃນເດືອນຕໍ່ໄປ

– ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກຳນົດໄວ້ໃນແຜນງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ, ຄວບຄຸມປະລິມານເງິນ ແລະ ຮັບປະກັນລະບົບການຊຳລະສະສາງ

ໃຫ້ຄ່ອງຕົວ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນ, ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນໃຫ້ຢູ່ໃນຂອບເຂດທີ່ກຳນົດໄວ້, ຄວບຄຸມປັດໄຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສຳຮອງເງິນຕາຕ່າງປະເທດໃຫ້ໄດ້ຕາມແຜນທີ່ກຳນົດໄວ້;

– ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນຳໃຊ້ເງິນກີບ ແລະ ການຊຳລະໂດຍບໍ່ໃຊ້ເງິນສົດ, ເກັບກຳສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;

– ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ທັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ຊຸກຍູ້ການປັບອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ຕິດຕາມການປ່ອຍສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ເສຍເກີນ 3%;

– ສືບຕໍ່ປັບປຸງນິຕິກຳຈຳນວນໜຶ່ງ ເປັນຕົ້ນ: ຂໍ້ຕົກລົງວ່າດ້ວຍການປະຕິບັດຕໍ່ບັນຊີທີ່ບໍ່ມີການເຄື່ອນໄຫວຢູ່ທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຜະລິດຕະພັນຂອງທະນາຄານ; ຂໍ້ຕົກລົງວ່າດ້ວຍຂອບເຂດການໃຫ້ສິນເຊື່ອຂອງທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ການຫັກເງິນແຮໜີ້ທີ່ຖືກຈັດຊັ້ນຂອງທະນາຄານ ຕົກລົງວ່າດ້ວຍການກູ້ຢືມເງິນຈາກຕ່າງປະເທດຂອງທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍຕົວແທນຜູ້ຖືຮຸ້ນກູ້; ຂໍ້ຕົກລົງວ່າດ້ວຍການຄອບຄອງກິດຈະການ; ຂໍ້ຕົກລົງວ່າດ້ວຍການກຳນົດລາຄາຮຸ້ນ ແລະ ຂໍ້ຕົກລົງວ່າດ້ວຍຕົວແທນຂຶ້ນທະບຽນຮຸ້ນກູ້; ຄຳແນະນຳກ່ຽວກັບຕົວຊີ້ບອກຂອງທຸລະກຳທີ່ສົງໃສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ພ້ອມກັນນັ້ນ, ກໍ່ໄດ້ສຸມໃສ່ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍວ່າດ້ວຍຫຼັກຊັບ; ກົດໝາຍວ່າດ້ວຍທະນາຄານທຸລະກິດ ແລະ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ;

– ສືບຕໍ່ກະກຽມເງື່ອນໄຂຕ່າງໆ ໃຫ້ແກ່ການຈັດກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ປະຈຳປີ 2017;

– ສືບຕໍ່ມອບ-ຮັບເອກະສານແຈ້ງຊັບສິນ ແລະ ລາຍຮັບ ຂອງບັນດາກົມ ແລະ ທຽບເທົ່າກົມ ທີ່ຂຶ້ນກັບ ທຫລ ທີ່ຢູ່ສູນກາງ;

– ກະກຽມຜ່ານຮ່າງກົດໝາຍວ່າດ້ວຍລະບົບການຊຳລະ ໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII;

– ກະກຽມຈັດກອງປະຊຸມເຜີຍແຜ່ວຽກງານການຈັດຕັ້ງປະຕິບັດປະເມີນຄວາມສ່ຽງລະດັບຊາດກ່ຽວກັບການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນຂະແໜງສະຖາບັນການເງິນ;

– ກະກຽມຈັດສຳມະນາເຜີຍແຜ່ວຽກງານຕະຫຼາດທຶນ ຢູ່ແຂວງສະຫວັນນະເຂດ;

– ສືບຕໍ່ວຽກງານປ້ອງກັນເວນຍາມຮັກສາຄວາມປອດໄພອາຄານສຳນັກງານໃຫ້ມີຄວາມສະຫງົບປອດໄພ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ
ຜູ້ວ່າການ

ດຣ ສົມພາວ ໄຟສິດ

ສົ່ງ:
- ຄະນະຜູ້ວ່າການ ທຫລ.
- ຜູ້ຊ່ວຍຄະນະຜູ້ວ່າການ ທຫລ.
- ຫ້ອງວ່າການ ສູນກາງພັກ.
- ກົມຄົ້ນຄວ້າສັງລວມ, ສຳນັກງານປະທານປະເທດ.
- ກົມຄົ້ນຄວ້າ-ສັງລວມ, ຫສນຍ.
- ຫ້ອງການກະຊວງແຜນການ ແລະ ການລົງທຶນ.
- ຫ້ອງການກະຊວງການເງິນ.
- ຄະນະກຳມະທິການແຜນການ ການເງິນ ແລະ ການກວດສອບ ສະພາແຫ່ງຊາດ.
- ບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ.
- ຄະນະຫ້ອງການ ທຫລ.
- ສຳເນົາ.